franklin county
# SENIOR options

## ໂຄງການຄົນອາວຸໂສ
## ກຳແພງນາຄອນແຟຣງກຣິນ

### ແຫລ່ງຂ່າວຂອງທ່ານສຳຣັບການຢູ່ຢ່າງອິສຣະໂທຣະ ສັບ

ໂຄງການຄົນອາວຸໂສກຳແພງນະຄອນແຟຣງກຣິນເປັນແຫລ່ງສຳຣັບຂ່າວແລະຊ່ອງທາງໄປຫາໂຄງການຊ່ວຍເຫຼືອ ສັງຄົມທ້ອງຖິ່ນຊຶ່ງສາມາດເຮັດໃຫ້ປະຊາຊົນຢູ່ໃນກຳແພງນະຄອນແຟຣງກລິນ, ອາຍຸ 60 ປີຂື້ນໄປໄດ້ຢູ່ຢ່າງອິສຣະ.
ໂຄງການຄົນອາວຸໂສແມ່ນບໍຣິຫານ**ໂດຍຫ້ອງການກ່ຽວກັບ**ຄົນອາວຸໂສກຳແພງນະຄອນແຟຣງກຣິນໂດຍການ ຮ່ວມມືກັບໂຄງການຄົນອາວຸໂສໃນພາກກາງຂອງຣັຖໂອຮາຍໂອ.
ໂຄງການຄົນອາວຸໂສໄດ້ທຶນຈາກພແນກການຣະດົມສົ່ງເສີມຄົນອາວຸໂສ.

ໂຄງການຄົນອາວຸໂສສາມາດບໍຣິການຊ່ວຍເຫຼືອສິ່ງເລົ່ານີ້:

* ໃຫ້ຂ່າວແລະເປັນປາກສຽງຕາງໜ້າ
* ຊ່ວຍເຫຼືອຕິດຕາມໃກ້ຊິດ
* ແມ່ບ້ານການເຮືອນ
* ຣະບົບຕອບສນອງຍາມສຸຂເສີນ
* ຂົນສົ່ງໄປປິ່ນປົວ
* ສຖານທີ່**ດູແລຄົນອາວຸໂສ**
* ສົ່ງອາຫານເຖິງບ້ານ
* ຊ້ອມແປງເຮືອນເລັກນ້
* ການບົວຣະບັດຮ່າງກາຍ
* ການພັກຜ່ອນຢູ່ບ້ານ

ເພື່ອຢາກໄດ້ຄຳຕອບແກ່ຄຳຖາມຂອງທ່ານກ່ຽວກັບໂຄງການຄົນອາວຸໂສນີ້ແລະໂຄງການອື່ນໆທີ່ມີອຳນວຍການໃຫ້**ໃນ** ກຳແພງນະຄອນແຟຣງກຣິນນີ້


**Franklin County Office on Aging**

**Monday - Friday 9 a.m. - 4:30 p.m.**
**Thursday 9 a.m. - 7 p.m.**

# (614) 525-6200

www.officeonaging.org

# ໂຄງການຄົນອາວຸໂສ
# ກຳແພງນາຄອນ
# ແຟຣງກລິນ

## ການຊ່ວຍເຫລືອຄົນອາວຸໂສມີດັ່ງນີ້

**ຂ່າວແລະເປັນປາກສຽງຕາງໜ້າ**

ບອກແຫ່ລງຂ່າວໂຄງການຊ່ວຍເຫຼືອປະຈຳທ້ອງຖິ່ນສຳຣັບອາວຸໂສໃຫສາທາຣະນະຊົນຮູ້.

**ການຊ່ວຍເຫຼືອ ຕິດຕາມໃກ້ສິດ**

ການປະເມີນເຫຕການແລະການພົວພັນກັບຄົນອາວຸໂສດຳເນີນຕໍ່ໆໄປນັ້ແມ່ນກິກກະທຳເພື່ອໃຫ້ແນ່ນອນວ່າພຽງພໍ ແລະມີຄຸນນະພາບຂອງອົງການຊ່ວຍເຫືລອທ້ອງຖິ່ນ.

**ແມ່ບ້ານການເຮືອນ**

ເພື່ອເຮັດໃຫ້ຄົນອາວຸໂສປະສົບກັບສະພາບແວດລ້ອມສະອາດ, ປອດພັຍແລະອານາມັຍດີແລະຮັກສາສະພາບເລົ່ານີ້ໄວ້. ການຊ່ວຍເຫືລອກິກກະທຳໃຫ້ດ້ານມຮຽນເຮືອນທຳຄວາມສອາດ, ຊັກເຄື່ອງນຸ່ງຫົ່ມ, ແລະຈັດທຳອາຫານ.

**ການບົວຣະບັດຮ່າງກາຍ**

ຄົນອາວຸໂສຈະກືກຊ່ວຍໃນການປະກອບກິຈະການທີ່ຈຳເປັນເຊັ່ນວາ: ທຳຄວາມສອາດຮ່າງກາຍ (ສຸຂາພິບາລ), ຫວີຜົມ, ບົວຣະບັດຕີນແລະການເຄື່ອນຍ້າຍໄປມາໃນບ້ານ.

**ສະຖານທີ່ດູແລຄົນອາວຸໂສ**

ໂຄງການຊ່ວຍເຫຼືອທ້ອງຖິ່ນໄດ້ຈັດໃຫ້ມີສະຖານທີ່ດູແລຄົນອາວຸໂສເພື່ອໃຫ້ເໝາະກັບຄວາມຕ້ອງການຂອງຄົນອາວຸໂສທີ່ສຸຂະພາບບໍ່ແຂງແຮງນັ້ນໄດ້ດຳເນີນກິຈະການໃນສະຖານທີ່ໆມີການປ້ອງກັນຈັດໃຫ້ມີໄວ້ແລ້ວ. ການບໍຣິການປະກອບເຂົ້າໃນໂຄງການນັ້ນມີ, ການປິ່ນປົວສຸຂພາບບົວຣະບັດຮ່າງກາຍ, ອາຫານກິຈະການຕ່າງໆແລະການຂົນສົ່ງ. ບາງໂຄງການກໍມີການຊ່ວຍເຫຼືອດ້ານສັງຄົມແລະການຮັກສາປິ່ນປົວໃຫ້ສຸຂພາບດີຄືນ.

**ອາຫານສົ່ງເຖິງບ້ານ**

ອາຫານທີ່ກືກຕ້ອງຕາມຫຼັກສຸຂພາບນັ້ນກືກນຳສົ່ງເຖິງບ້ານຂອງຄົນອາວຸໂສເພື່ອສົ່ງເສີມໃຫ້ມີອາຫານທີ່ບຳຣຸງກາຍພຽງພໍ. ອາຫານທ່ຽງຍັງຮ້ອນໆຢູ່ກໍມີໃຫ້ແຕ່ວັນຈັນເຖິງວັນສຸກ. ອາຫານເຢັນສຳຣັບຕອນຄ່ຳແລະ / ຫືລສຳຣັບວັນທ້າຍອາທິດກໍອາດມີບໍຣິການໃຫ້.

**ການພັກຜ່ອນຢູ່ບ້ານ**

ບຸກຄົນຜູ້ກືກຝຶກຫັດງານເປັນຢ່າງດີແລ້ວກໍມີເພື່ອຊ່ວຍບົວຣະບັດຄົນອາວຸໂສ. ອັນນີ້ເພື່ອເຮັດໃຫ້ຜູ້ທີ່ໃຫ້ການປິ່ນປົວນັ້ນໄດ້ສນຸກສນານໃຊ້ເວລາສ່ວນຕົວໂດຽປັສະຈາກຄວາມກັງວົນໃຈ.

**ການຂົນສົ່ງໄປປິ່ນປົວ**

ການຂົນສົ່ງໄປຫາສະຖານທີ່ປິ່ນປົວກໍມີໃຫ້ສຳຣັບຄົນອາວຸໂສ. ການຂົນສົ່ງສຳຣັບພວກທີ່ນັ່ງເກົ້າອີ້ລໍ້ກໍມີແລະຜູ້ຕິດຕາມໄປສົ່ງຜູ້ນຶ່ງສາມາດຂີ່ໄປນຳຄົນເຈັບແຕ່ລະຄົນໄດ້.

**ຣະບົບຕອບສນອງຍາມສຸຂເສີນ**

ຣະບົບຢ່າງນຶ່ງກືກຕິດຕັ້ງເພື່ອກຳກັບຄວາມປອດພັຍຂອງຄົນອາວຸໂສຢູ່ທີ່ບ້ານແລະໃຫ້ມີທາງຕິດຕໍ່ໄປຫາການຊ່ວຍເຫຼືອຍາມສຸຂເສີນໂດຍຜ່ານເຄື່ອງຕິດຕໍ່ເອເລັກໂຕຼນິກກໍມີອຳນວຍໃຫ້.

**ການຊ້ອມແປງເຮືອນເລັກນ້ອຍ**

ການຊ້ອມແປງຫລາຍຢ່າງສາມາດເຮັດໃຫ້ເຮືອນຢູ່ຂອງຄົນອາວຸໂສມີການເປັນຢູ່ແບບອິສຣະແລະມີຄວາມປອດພັຍດີຂື້ນ.